ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຫະພັນແມ່ຍິງ ທຫລ ມອບເຄື່ອງຊ່ວຍເຫຼືອ ສູນສິງເຄາະ ນະຄອນຫຼວງວຽງຈັນ



ເພື່ອເປັນການສ້າງຂະບວນການສະເຫຼີມສະຫຼອງວັນສ້າງຕັ້ງແມ່ຍິງສາກົນ ຄົບຮອບ 109 ປີ (8 ມີນາ 1910 – 8 ມີນາ 2019) ແລະ ເພື່ອເປັນການຊ່ວຍເຫຼືອສັງຄົມ. ສະຫະພັນແມ່ຍິງທະນາຄານແຫ່ງສປປ ລາວ (ທຫລ) ໄດ້ໄປມອບເຄື່ອງຊ່ວຍເຫຼືອໃຫ້ແກ່ສູນສິງເຄາະນະຄອນຫຼວງວຽງຈັນ ທີ່ບ້ານ ສີມສະຫງ່າ, ນະຄອນຫຼວງວຽງຈັນ ໃນຕອນເຊົ້າຂອງວັນທີ 05 ເມສາ 2019 ນຳໂດຍທ່ານນາງ ສາຍສະໝອນ ຈັນທະຈັກ, ປະທານສະຫະພັນແມ່ຍິງທະນາຄານແຫ່ງສປປ ລາວ ພ້ອມດ້ວຍຄະນະສະຫະພັນແມ່ຍິງ ທຫລ ແລະ ຕາງໜ້າຄະນະສະຫະພັນແມ່ຍິງບັນດາຮາກຖານທີ່ຂຶ້ນກັບສະຫະພັນແມ່ຍິງທະນາຄານແຫ່ງສປປ ລາວ. ເຊິ່ງສິ່ງຂອງທີ່ນຳໄປຊ່ວຍເຫຼືອເປັນສິ່ງຂອງທີ່ຈຳເປັນ ແລະ ນຳໃຊ້ໃນຊີວິດປະຈຳວັນ ເຊິ່ງປະກອບມີ: ເຂົ້າສານ 10 ເປົາ, ສາດ 10 ຜືນ ແລະ ເຄື່ອງອຸປະໂພກ, ບໍລິໂພກ ອື່ນໆ ລວມມູນຄ່າທັງໝົດຈຳນວນ 5.000.000 ກີບ ແລະ ຕາງໜ້າຮັບໂດຍ ທ່ານ ປານີ ທິລະສັກ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພ້ອມນີ້ຜູ້ເຂົ້າຮ່ວມກໍ່ໄດ້ຮັບຟັງເຖິງປະຫວັດຄວາມເປັນມາຂອງສູນ, ການຊ່ວຍເຫຼືອຮັບຄົນເຂົ້າສູນ, ວິທີການບຳບັດຄົນທີ່ເຂົ້າມາຢູ່ສູນດັ່ງກ່າວ ແລະ ເລົ່າເຖິງຂໍ້ສະດວກ-ຂໍ້ຫຍຸ້ງຍາກໃນການບໍລິຫານສູນ.

 

ຜ່ານການຮັບຟັງດັ່ງກ່າວເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຫັນໄດ້ເຖິງຄວາມເປັນຫ່ວງເປັນໄຍຂອງພາກລັດໃນການພະຍາຍາມຊ່ວຍເຫຼືອຄົນທຸກຍາກໃນສັງຄົມໃຫ້ມີຊີວິດທີ່ດີຂຶ້ນ. ພ້ອມກັນນີ້, ທາງຄະນະສະຫະພັນແມ່ຍິງກໍ່ໄດ້ສະແດງຄວາມດີໃຈທີ່ໄດ້ນຳສິ່ງຂອງຊ່ວຍເຫຼືອມາມອບໃຫ້ແກ່ສູນ ແລະ ຍັງຈະສືບຕໍ່ໃຫ້ຄວາມຊ່ວຍເຫຼືອໃນອະນາຄົດຂ້າງໜ້າ.

ໃນຕອນທ້າຍ, ສູນສົງເຄາະນະຄອນຫຼວງວຽງຈັນໄດ້ມອບໃບກຽດຕິຄຸນໃຫ້ແກ່ຄະນະສະຫະພັນແມ່ຍິງທະນາຄານແຫ່ງສປປ ລາວ ເພື່ອສະແດງຄວາມຂອບໃຈທີ່ໄດ້ນຳສິ່ງຂອງມາຊ່ວຍເຫຼືອແກ່ສູນໃນຄັ້ງນີ້.

**# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**